ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 10438 /ກພສ.

ນະຄອນຫຼວງວຽງຈັນ, ວັນທີ 20 ຕຸລາ 2023

# ແຈ້ງການ

**ເຖິງ:** ຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າພາສີປະຈຳແຂວງ, ນະຄອນຫລວງວຽງຈັນ, ດ່ານພາສີຊາຍແດນ ໃນຂອບເຂດ ທົ່ວປະເທດ.

**ເລື່ອງ:** ການຈັດເກັບຄ່າບໍລິການແຈ້ງພາສີ ແບບເອເລັກໂຕຣນິກ National Single Window Asycuda Plus (NSWA+).

- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 3299/ກງ, ລົງວັນທີ 19 ຕຸລາ 2023 ວ່າດ້ວຍການຮັບຮອງ ການເກັບຄ່າບໍລິການແຈ້ງພາສີ ແບບເອເລັກໂຕຣນິກ National Single Window Asycuda Plus (NSWA+)

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ການແຈ້ງພາສີ ແບບເອເລັກໂຕຣນິກ National Single Window Asycuda Plus (NSWA+) ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ຮັບປະກັນຄວາມຍືນຍົງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ແລະ ສາມາດຕິດຕາມກວດກາໄດ້.

**ກົມພາສີ ອອກແຈ້ງການ ດັ່ງນີ້:**

1) ໃຫ້ເກັບຄ່າບໍລິການແຈ້ງພາສີ ແບບເອເລັກໂຕຣນິກ (NSWA+) ຈຳນວນ: 400.000 ກີບ (ສີ່ແສນກີບ); **ໃນນັ້ນ:** ຄ່າບໍລິການລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີ (Asycuda) ຈຳນວນ: 100.000 ກີບຕໍ່ຊຸດໃບແຈ້ງພາສີເປັນລາຍລະອຽດ, ຄ່າບໍລິການລະບົບປະຕູດຽວແຫ່ງຊາດ ຈຳນວນ: 120.000 ກີບຕໍ່ທຸລະກຳ, ຄ່າພັດທະນາລະບົບ Smart customs ຈຳນວນ: 130.000 ກີບຕໍ່ທຸລະກຳ ແລະ ຄ່າບຳລຸງຮັກສາອຸປະກອນ Smart customs ຈຳນວນ: 50.000 ກີບຕໍ່ທຸລະກຳ;
2) ການມອບເງິນແມ່ນໃຫ້ມອບຜ່ານຊ່ອງທາງຂອງທະນາຄານ ທີ່ເຂົ້າຮ່ວມໂຄງການເປັນສະມາຊິກ Lapnet ໂດຍສະເພາະແມ່ນ Finlink ແລະ ໃຫ້ແຍກການມອບເປັນ 2 ບັນຊີ ຄືດັ່ງນີ້:

1. ຄ່າບໍລິການລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີ Asycuda (ງົບປະມານຄັງວິຊາການຂະແໜງພາສີ ຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ ກຳນົດ) ຈຳນວນ: 100.000 ກີບຕໍ່ຊຸດໃບແຈ້ງພາສີເປັນລາຍລະອຽດ ແມ່ນໃຫ້ມອບເຂົ້າບັນຊີ ງົບປະມານເງິນວິຊາການ ຂອງຂະແໜງພາສີ ຢູ່ຄັງເງິນແຫ່ງຊາດ, ໝາຍເລກບັນຊີ 010110000339453001/D00100271;

2. ມອບເປັນຄ່າບໍລິການ ລະບົບປະຕູດຽວແຫ່ງຊາດ ຈຳນວນ: 300.000 ກີບຕໍ່ທຸລະກຳ ໃຫ້ມອບເຂົ້າບັນຊີ ຂອງ ບໍລິສັດບີແວັກ (ລາວ) ຈຳກັດ BIVAC (LAO) Co., Ltd. ຕາມໝາຍເລກບັນຊີຄື:

- ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໝາຍເລກບັນຊີ 010110001181791001;
- ທະນາຄານພັດທະນາລາວ ໝາຍເລກບັນຊີ 0302000010003513;

3) ໃຫ້ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະ ແຜນການ ກົມພາສີ, ພາສີປະຈຳແຂວງ, ພາສີນະຄອນຫລວງ, ດ່ານພາສີຊາຍແດນ ແລະ ບໍລິສັດບີແວັກລາວ ຈຳກັດ BIVAC (LAO) Co., Ltd. ສະຫລຸບ, ຕິດຕາມ ການລາຍຮັບ ດັ່ງກ່າວ ຮ່ວມກັນ ເປັນແຕ່ລະເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ ປີ;

4) ການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ສັງລວມ, ລາຍງານ ກົມພາສີ ເພື່ອເປັນຂໍ້ມູນໃນການ ລາຍງານ ກະຊວງການເງິນ ມີທິດຊີ້ນຳໃນການຈັດຕັ້ງປະຕິບັດ ໃຫ້ທັນກັບສະພາບການ;

5) ແຈ້ງການ ສະບັບນີ້ ມີຜົນນຳໃຊ້ນັບແຕ່ວັນທີ **23 ຕຸລາ 2023** ເປັນຕົ້ນໄປ ຈົນກ່ວາຈະມີການປັບປຸງປ່ຽນແປງ, ແຈ້ງການໃດ ທີ່ຂັດກັບແຈ້ງການສະບັບນີ້ແມ່ນຖືວ່າລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມ**

ກະຊວງການເງິນ ກົມພາສີ

ພູເຂົາຄຳ ວັນນະວົງໄຊ